**ມິຊຊາອາທິດທີ 2 ກຳນົດບຳເພັນສິນ**

**ວັນທີ 13 ມີນາ 2022**



**ພຣະວໍລະສານໂດຍນັກບຸນລູກາ 9, 28-36**

ໃນເວລານັ້ນ, ພຣະເຢຊູເຈົ້າໄດ້ພາເປໂຕ, ຢາໂກເບ ແລະຢວງຂຶ້ນໄປພາວະນາຢູ່ເທິງພູເຂົາ. ເວລາກຳລັງຊົງພາວະນາຢູ່ນັ້ນ ສີໜ້າຂອງພຣະອົງເຈົ້າກໍປ່ຽນໄປ, ເຄື່ອງທົງສ່ອງແສງຂາວຮຸ່ງເຮືອງ. ເວລານັ້ນມີບຸລຸດສອງຄົນມາສົນທະນາກັບພຣະອົງ, ແມ່ນໂມແຊ ແລະເອລີ ຜູ້ປະຈັກມາໃນແສງລັດສະໝີແລະເວົ້າເຖິງການຈາກໄປຂອງພຣະອົງທີ່ຈະສຳເລັດຢູ່ນະຄອນເຢລູຊາແລມ. ສ່ວນເປໂຕກັບໝູ່ພາກັນເຫງົານອນ, ພໍຊວາດຕື່ນຂຶ້ນກໍເຫັນແສງລັດສະໝີຂອງພຣະອົງ ແລະບຸລຸດທັງສອງຢືນຢູ່ກັບພຣະອົງ.

ຂະນະບຸລຸດທັງສອງຈະຈາກພຣະອົງໄປ, ເປໂຕຈຶ່ງທູນພຣະເຢຊູເຈົ້າວ່າ: ພຣະອາຈານເອີຍ! ພວກເຮົາຢູ່ນີ້ເກີນວ່າດີຫລາຍ, ພວກຂ້າພະເຈົ້າຈະປຸກຜາມຂຶ້ນສາມຫລັງ, ຫລັງໜຶ່ງຖະຫວາຍພຣະອົງ, ຫລັງໜຶ່ງຖະຫວາຍໂມແຊ ແລະອີກຫລັງໜຶ່ງຖະຫວາຍເອລີ. ເປໂຕເວົ້າໄປໂດຍບໍ່ຮູ້ຈັກວ່າຕົນໄດ້ເວົ້າຫຍັງ. ເວລາທີ່ເປໂຕກາບທູນຢູ່ນັ້ນ ກໍມີເມກກ້ອນໜຶ່ງລອຍມາປົກບັງທ່ານທັງສາມ ແລະເມື່ອທ່ານທັງສາມເຂົ້າໄປໃນເມກ ພວກສາວົກຕົກໃຈສະທ້ານຢ້ານກົວ. ເລີຍມີສຽງດັງມາຈາກເມກນັ້ນເວົ້າວ່າ: ຜູ້ນີ້ເປັນບຸດສຸດທີ່ຮັກຂອງເຮົາ ຈົ່ງເຊື່ອຟັງເພິ່ນເຖີດ. ເມື່ອໄດ້ຍິນສຽງນັ້ນ ກໍເຫັນແຕ່ພຣະເຢຊູເຈົ້າຜູ້ດຽວ. ພວກສາວົກທັງສາມໄດ້ພາກັນມິດ ແລະບໍ່ໄດ້ເລົ່າຫຍັງໃຫ້ຜູ້ໃດຟັງເຖິງເຫດການທີ່ໄດ້ເຫັນໃນວັນນັ້ນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ອາທິດແລ້ວນີ້, ພຣະເຢຊູເຈົ້າໄດ້ເຂົ້າໄປໃນທີ່ປ່ຽວອັນແມ່ນສະຖານທີ່ແຫ່ງການປະຈົນຫລອກລວງ. ຜີປີສາດໄດ້ມາຫລອກລວງພຣະເຢຊູເຈົ້າເຖິງສິ່ງທີ່ເປັນຂອງໂລກ. ບໍ່ວ່າຈະເປັນເລື່ອງອາຫານການກິນ, ຄວາມຮັ່ງມີແລະຍົດຖາບັນດາສັກ. ແຕ່ພຣະເຢຊູເຈົ້າໄດ້ເອົາຊະນະສິ່ງທີ່ເປັນຂອງໂລກນີ້ໄດ້ ດ້ວຍອາໄສວາຈາຂອງພຣະອົງ.

ວັນອາທິດນີ້, ພຣະເຢຊູເຈົ້າພ້ອມກັບພວກລູກສິດ: ເປໂຕ, ຢາໂກເບແລະຢວງຂຶ້ນໄປບົນພູສູງ. ພູເຂົາເປັນສະຖານທີ່ແຫ່ງການພົບພໍ້ພຣະເຈົ້າ, ແຫ່ງການສົນທະນາກັບພຣະອົງ. ແລະກໍແມ່ນບົນພູເຂົານີ້ເອງທີ່ພຣະເຢຊູເຈົ້າໄດ້ສຳແດງພຣະກາຍອັນຮຸ່ງເຮືອງຂອງພຣະອົງໃຫ້ພວກລູກສິດເຫັນ. ສິ່ງທີ່ໜ້າສັງເກດໃນທີ່ນີ້ກໍຄື, ເມື່ອໂມແຊແລະເອລີກຳລັງສົນທະນາກັບພຣະເຢຊູເຈົ້າກ່ຽວກັບພາລະກິດຂອງພຣະອົງທີ່ຈະສຳເລັດຢູ່ນະຄອນເຢລູຊາແລມອັນແມ່ນການທໍລະມານ, ຕາຍແລະການກັບເປັນຄືນມາຂອງພຣະອົງນັ້ນ, ພວກລູກສິດພັດພາກັນເຫງົານອນ. ໝາຍວ່າພວກເຂົາບໍ່ໄດ້ເຂົ້າໃຈຄວາມໝາຍຂອງການທໍລະມານ, ການຕາຍແລະການກັບເປັນຄືນມາຂອງພຣະເຢຊູເຈົ້າ. ດ້ວຍເຫດນີ້, ເປໂຕຈຶ່ງບໍ່ຢາກລົງຈາກພູເຂົາ. ທ່ານຢາກປຸກຜາມຂຶ້ນສາມຫລັງເພື່ອຢູ່ໃນສະຖານທີ່ແຫ່ງຄວາມຮຸ່ງເຮືອງນີ້. ຫລືເວົ້າອີກຢ່າງ, ເປໂຕບໍ່ຢາກຜ່ານຫົນທາງແຫ່ງກາງເຂນຂອງພຣະເຢຊູເຈົ້າ, ແຕ່ທ່ານຢາກໄປເຖິງການກັບເປັນຄືນມາຢ່າງຮຸ່ງເຮືອງຂອງພຣະອົງໂດຍປາດສະຈາກການທໍລະມານແລະການຕາຍ. ຄວາມຄິດຂອງເປໂຕກໍເໝືອນຄວາມຄິດຂອງພວກເຮົາແຕ່ລະຄົນເຊັ່ນດຽວກັນ. ພວກເຮົາບໍ່ຢາກແບກກາງເຂນຂອງຕົນແລະຕິດຕາມພຣະເຢຊູເຈົ້າໄປ. ພວກເຮົາບໍ່ຢາກຮ່ວມທໍລະມານແລະຕາຍກັບພຣະອົງ. ພວກເຮົາພຽງແຕ່ຢາກກັບເປັນຄືນມາຢ່າງຮຸ່ງເຮືອງເໝືອນກັບພຣະອົງເທົ່ານັ້ນ. ສິ່ງນີ້ສະແດງອອກຢູ່ບ່ອນວ່າ ເມື່ອພວກເຮົາມີສຸຂະພາບດີແລະຢູ່ໃນຄວາມສະໜຸກສຸກສະບາຍພວກເຮົາກໍເຊື່ອໃນພຣະເຈົ້າ. ແຕ່ມື້ໜຶ່ງເມື່ອພວກເຮົາຕ້ອງພົບກັບການທົດສອບ, ຄວາມຫຍຸ້ງຍາກແລະບັນຫາຂອງຊີວິດ, ພວກເຮົາພັດຂາດຄວາມເຊື່ອໃນພຣະເຈົ້າແລະປິ່ນຫລັງໃສ່ພຣະອົງ. ແຕ່ວັນນີ້, ພຣະບິດາເຈົ້າໄດ້ຢັ້ງຢືນໃຫ້ພວກເຮົາເຂົ້າໃຈວ່າ ຖ້າພວກເຮົາຢາກກັບເປັນຄືນມາຢ່າງຮຸ່ງເຮືອງເໝືອນພຣະເຢຊູເຈົ້າ, ໃຫ້ພວກເຮົາເຊື່ອຟັງພຣະອົງ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດເພີ່ມທະວີຄວາມເຊື່ອໃຫ້ລູກດ້ວຍ. ເພື່ອລູກຈະໄດ້ມີຄວາມກ້າຫານແບກກາງເຂນຂອງຕົນແລະຕິດຕາມພຣະເຢຊູເຈົ້າໄປຈົນເຖິງຈຸດໝາຍປາຍທາງແຫ່ງຊີວິດ. ເພື່ອຈະໄດ້ກັບເປັນຄືນມາຮ່ວມກັບພຣະອົງ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ